ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 261 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 02 ສິງຫາ 2019

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 14/ສພຊ, ລົງວັນທີ 21 ມິຖຸນາ 2019 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 20/ຄປຈ, ລົງວັນທີ 19 ກໍລະກົດ 2019.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 14 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 21 / 06 / 19

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ໃນວາລະກອງ ປະຊຸມ ຄັ້ງວັນທີ 21 ມິຖຸນາ 2019.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 70 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 21 ມິຖຸນາ 2019

# ກົດໝາຍວ່າດ້ວຍທີ່ດິນ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານທີ່ດິນ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິຜົນ ແນໃສ່ຮັບປະກັນການປົກປັກຮັກສາ, ພັດທະນາ ແລະ ການນຳໃຊ້ທີ່ດິນຖືກຕ້ອງຕາມເປົ້າໝາຍ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ, ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ຕາມທິດຍືນຍົງ ແລະ ເຮັດໃຫ້ທີ່ດິນມີມູນຄ່າເພີ່ມຂຶ້ນ ລວມທັງປົກປັກຮັກສາສິ່ງແວດລ້ອມ, ເຂດນ້ຳແດນດິນ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 2 (ປັບປຸງ) ທີ່ດິນ**

ທີ່ດິນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ເນື້ອທີ່ດິນ ຊຶ່ງນອນຢູ່ໃນເຂດແດນຂອງ ສປປ ລາວ ປະກອບດ້ວຍ ໜ້າດິນ, ພື້ນດິນ, ພູຜາ, ເກາະດອນ ແລະ ດິນພື້ນນ້ຳ.

ທີ່ດິນ ແມ່ນ ຊັບພະຍາກອນອັນລ້ຳຄ່າ ແລະ ທຶນຮອນອັນມະຫາສານຂອງຊາດ ທີ່ເປັນບ່ອນດຳລົງຊີວິດ ແລະ ທຳມາຫາກິນຂອງພົນລະເມືອງລາວ, ເປັນພາຫະນະອັນສຳຄັນ ແລະ ປັດໄຈຕົ້ນຕໍຂອງການຜະລິດ, ການພັດທະນາເສດຖະກິດ-ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 3 (ປັບປຸງ) ກຳມະສິດກ່ຽວກັບທີ່ດິນ**

ທີ່ດິນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດ ເປັນຕົວແທນເຈົ້າກຳມະສິດດັ່ງກ່າວ ແລະ ຄຸ້ມຄອງຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມີການຈັດສັນ, ວາງແຜນການນຳໃຊ້ ແລະ ພັດທະນາທີ່ດິນ.

ລັດ ມອບສິດນຳໃຊ້ທີ່ດິນໃຫ້ພົນລະເມືອງລາວ, ລວມທັງ ນິຕິບຸກຄົນ, ລວມໝູ່ ແລະ ການຈັດຕັ້ງທີ່ເປັນພົນລະເມືອງລາວ ນຳໃຊ້ຢ່າງຍາວນານ ແລະ ໝັ້ນຄົງ.

ລັດ ມອບໃຫ້ກົມກອງປະກອບອາວຸດ, ອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ ຄຸ້ມຄອງ ແລະ ນຳໃຊ້ທີ່ດິນຂອງລັດ.

ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ມີສິດເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ຫຼື ຊື້ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ແລະ ເຊົ່າທີ່ດິນຂອງພົນລະເມືອງລາວ. ສຳລັບການຈັດຕັ້ງຂອງບຸກຄົນດັ່ງກ່າວທີ່ສ້າງຕັ້ງຂຶ້ນຕາມການອະນຸຍາດຂອງລັດ ມີສິດແຕ່ເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ແລະ ເຊົ່າທີ່ດິນຂອງພົນລະເມືອງລາວ.

ລັດ ຮັບຮູ້ສິດນຳໃຊ້ທີ່ດິນສະເພາະແຕ່ເທິງໜ້າດິນເທົ່ານັ້ນ, ສ່ວນຊັບພະຍາກອນທຳມະຊາດທີ່ມີຢູ່ໃນພື້ນດິນ ແລະ ໜ້າດິນ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ.

ລັດ ຈະໂອນສິດນຳໃຊ້ທີ່ດິນຄືນຈາກຜູ້ຮັບສິດນຳໃຊ້ທີ່ດິນໃນກໍລະນີມີຄວາມຈຳເປັນ ເພື່ອຜົນປະໂຫຍດລວມຂອງຊາດ ດ້ວຍການທົດແທນຄ່າເສຍຫາຍທີ່ເກີດຈາກການໂອນເອົາສິດນັ້ນ.

ລັດ ຈະຖອນສິດນຳໃຊ້ທີ່ດິນໃນກໍລະນີມີການລະເມີດກົດໝາຍ ຫຼື ສັນຍາ ໂດຍບໍ່ທົດແທນຄ່າເສຍຫາຍໃຫ້ຜູ້ນຳໃຊ້ທີ່ດິນນັ້ນ ແຕ່ຢ່າງໃດ.

**ມາດຕາ 4 (ໃໝ່) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໜ້າດິນ** ໝາຍເຖິງ ຊັ້ນເທິງຂອງດິນທຸກຕອນ ຊຶ່ງມີ ຕົ້ນໄມ້, ເຄື່ອງປ່າຂອງດົງ, ພືດ, ຊີວະນາງພັນ, ນ້ຳ, ແຮ່ທາດ ແລະ ອື່ນໆ;

2. **ພື້ນດິນ** ໝາຍເຖິງ ຊັ້ນລຸ່ມຂອງດິນທຸກຕອນ ຊຶ່ງມີ ຊັ້ນດິນ, ຊັ້ນຫີນ, ນ້ຳໃຕ້ດິນ, ອາຍແກ໊ດ, ແຮ່ທາດ ແລະ ອື່ນໆ;

3. **ເກາະດອນ** ໝາຍເຖິງ ທີ່ດິນຢູ່ບໍລິເວນນ້ຳ ຊຶ່ງເກີດຂຶ້ນຕາມທຳມະຊາດ ຫຼື ທີ່ດິນປັ້ງໃໝ່ໃນຂອບເຂດທີ່ດິນບໍລິເວນນ້ຳ;

4. **ດິນພື້ນນ້ຳ** ໝາຍເຖິງ ທີ່ດິນຢູ່ພື້ນນ້ຳ ຊຶ່ງມີ ສັດນ້ຳ, ພືດນ້ຳ, ແຮ່ທາດ ແລະ ອື່ນໆ;

5. **ການຈັບຈອງທີ່ດິນ** ໝາຍເຖິງ ການເຂົ້າຄອບຄອງທີ່ດິນ ໂດຍບໍ່ໄດ້ຮັບອະນຸຍາດ ດ້ວຍຮູບການຕ່າງໆ;

6. **ການບຸກລຸກທີ່ດິນ** ໝາຍເຖິງ ການລ່ວງລະເມີດສິດນຳໃຊ້ທີ່ດິນຂອງລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ດ້ວຍການໃຊ້ສິດເກີນຂອບເຂດ, ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດຂອງຕົນ;

7. **ສິດນຳໃຊ້ທີ່ດິນຂອງລັດ** ໝາຍເຖິງ ສິດນຳໃຊ້ທີ່ດິນຂອງອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ລັດມອບໃຫ້ແບບບໍ່ມີກຳນົດ ຫຼື ຂາຍ ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍໃດໜຶ່ງ ຕາມແຜນການຈັດສັນທີ່ດິນ ແລະ ແຜນການນຳໃຊ້ທີ່ດິນຂອງລັດ;

8. **ສິດນຳໃຊ້ທີ່ດິນຂອງບຸກຄົນ** ໝາຍເຖິງ ສິດນຳໃຊ້ທີ່ດິນຂອງພົນລະເມືອງລາວ ຊຶ່ງມີໃບຕາດິນຖືກຕ້ອງຕາມກົດໝາຍ;

9. **ສິດນຳໃຊ້ທີ່ດິນຂອງນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເປັນພົນລະເມືອງລາວ** ໝາຍເຖິງ ສິດນຳໃຊ້ທີ່ດິນຂອງນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເປັນພົນລະເມືອງລາວ ຊຶ່ງມີໃບຕາດິນຖືກຕ້ອງຕາມກົດໝາຍ;

10. **ສິດນຳໃຊ້ທີ່ດິນຂອງ ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວທີ່ສ້າງຕັ້ງຂຶ້ນຕາມການອະນຸຍາດຂອງລັດ** ໝາຍເຖິງ ສິດນຳໃຊ້ທີ່ດິນທີ່ໄດ້ມາຈາກການເຊົ່າ ຫຼື ສຳປະທານ, ຊື້ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ເພື່ອເປັນບ່ອນດຳລົງຊີວິດ, ທຳມາຫາກິນ ແລະ ດຳເນີນທຸລະກິດຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ;

11. **ຖານະສິດຕໍ່ທີ່ດິນ** ໝາຍເຖິງ ສິດຂອງຜູ້ເປັນເຈົ້າຂອງສິດນຳໃຊ້ທີ່ດິນ ທີ່ບັນທຶກໄວ້ໃນປື້ມທະບຽນທີ່ດິນ ແລະ ໃບຕາດິນ ເພື່ອເປັນການຢັ້ງຢືນຖານະຄວາມເປັນເຈົ້າຂອງ ເປັນຕົ້ນ ທີ່ດິນ ທີ່ເປັນຊັບເດີມ ຫຼື ສິນສົມສ້າງ ຫຼື ສິດນຳໃຊ້ທີ່ດິນຮ່ວມກັນ;

12. **ໃບຢັ້ງຢືນການນຳໃຊ້ທີ່ດິນ** ໝາຍເຖິງ ເອກະສານທີ່ຢັ້ງຢືນສິດນຳໃຊ້ທີ່ດິນ ຊຶ່ງອົງການທີ່ກ່ຽວຂ້ອງຂອງລັດ ອອກໃຫ້ພົນລະເມືອງລາວ ຕາມນະໂຍບາຍຈັດສັນ ເພື່ອເປັນບ່ອນຢູ່ອາໄສ ແລະ ທຳການຜະລິດ;

13. **ໃບຢັ້ງຢືນການພັດທະນາທີ່ດິນ** ໝາຍເຖິງ ເອກະສານທາງການທີ່ອົງການທີ່ກ່ຽວຂ້ອງຂອງລັດອອກໃຫ້ພາຍຫຼັງໄດ້ກວດກາຄວາມຖືກຕ້ອງຕາມເງື່ອນໄຂທີ່ກຳນົດໄວ້ໃນໃບຢັ້ງຢືນການນຳໃຊ້ທີ່ດິນ;

14. **ການຍົກສິດນຳໃຊ້ທີ່ດິນ** ໝາຍເຖິງ ການເອົາສິດນຳໃຊ້ທີ່ດິນຂອງຕົນໃຫ້ບຸກຄົນໃດໜຶ່ງ ຊຶ່ງຜູ້ຮັບສິດນຳໃຊ້ທີ່ດິນ ໄດ້ປະຕິບັດພັນທະໃດໜຶ່ງຕາມການຕົກລົງກ່ອນ ຫຼື ຫຼັງການຮັບສິດນັ້ນ, ສິດນຳໃຊ້ທີ່ດິນດັ່ງກ່າວ ຈະກາຍເປັນສິດນຳໃຊ້ທີ່ດິນ ຂອງຜູ້ຮັບສິດນຳໃຊ້ທີ່ດິນ ກໍຕໍ່ເມື່ອຜູ້ກ່ຽວຫາກໄດ້ປະຕິບັດພັນທະຄົບຖ້ວນຕາມເງື່ອນໄຂທີ່ໄດ້ກຳນົດໄວ້;

15. **ທີ່ດິນປ່າຊຸດໂຊມ** ໝາຍເຖິງ ເຂດທີ່ດິນປ່າໄມ້ ທີ່ຖືກທຳລາຍຢ່າງໜັກເປັນເວລາຫຼາຍປີຕໍ່ເນື່ອງກັນ ແລະ ໃຊ້ເວລາຫຼາຍສິບປີ ຈຶ່ງສາມາດຟື້ນຟູດ້ວຍຕົວມັນເອງໄດ້ ຊຶ່ງຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ບໍ່ເກີນ ສິບສ່ວນຮ້ອຍ ແລະ ບໍລິມາດໄມ້ຢືນຕົ້ນທີ່ມີຂະໜາດໜ້າຕ້າງ ສິບຊັງຕີແມັດຂຶ້ນໄປ ບໍ່ເກີນຊາວແມັດກ້ອນ ຕໍ່ໜຶ່ງເຮັກຕາ;

16. **ທີ່ດິນປ່າປອກໂຫຼ້ນ** ໝາຍເຖິງ ເຂດທີ່ດິນປ່າໄມ້ ທີ່ຖືກທຳລາຍຢ່າງໜັກ ເປັນເວລາຫຼາຍປີ ຕໍ່ເນື່ອງກັນເຮັດໃຫ້ເນື້ອທີ່ດັ່ງກ່າວປົກຫຸ້ມດ້ວຍ ປ່າຫຍ້າຄາ, ຫຍ້າແຝກ, ຫຍ້າແຂມ, ປ່າພຸ່ມ ຊຶ່ງຕົ້ນໄມ້ບໍ່ສາມາດຟື້ນຟູດ້ວຍຕົວມັນເອງເປັນປ່າໄມ້ ໂດຍທຳມະຊາດໄດ້;

17. **ໃບແຜນທີ່ດິນ** ໝາຍເຖິງ ເອກະສານຢັ້ງຢືນສິດນຳໃຊ້ທີ່ດິນຕາມກົດໝາຍ ທີ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ອອກໃຫ້ພາຍຫຼັງໄດ້ມີການສຳຫຼວດວັດແທກ ແລະ ພິສູດຫຼັກຖານກ່ຽວກັບທີ່ດິນຢ່າງຖືກຕ້ອງ;

18. **ໃບອະນຸຍາດນຳໃຊ້ທີ່ດິນຂອງລັດ** ໝາຍເຖິງ ເອກະສານຢັ້ງຢືນສິດນຳໃຊ້ທີ່ດິນຂອງລັດທີ່ອອກໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍໃດໜຶ່ງ ຕາມກົດໝາຍ;

19. **ພື້ນທີ່ດິນເຂດພະລັງງານ** ໝາຍເຖິງ ພື້ນທີ່ດິນ ທີ່ໄດ້ກຳນົດໃຫ້ເປັນທີ່ຕັ້ງຂອງເຂື່ອນ, ໂຮງໄຟຟ້າ, ສະຖານີໄຟຟ້າ, ແລວສາຍສົ່ງໄຟຟ້າ, ແລວທາງທໍ່ພະລັງງານ, ອາຍແກັດ ແລະ ທີ່ດິນອື່ນທີ່ນຳໃຊ້ເຂົ້າໃນເປົ້າໝາຍການຜະລິດ, ສົ່ງ ແລະ ຈຳໜ່າຍ ພະລັງງານ;

20. **ພື້ນທີ່ດິນເຂດບໍ່ແຮ່** ໝາຍເຖິງ ຂອບເຂດເນື້ອທີ່ຂຸດຄົ້ນ, ເຂດໂຮງງານປຸງແຕ່ງ, ລານ ຫຼື ສາງເກັບມ້ຽນແຮ່, ອ່າງເກັບນ້ຳເປື້ອນ, ເສັ້ນທາງເຄື່ອນຍ້າຍ, ເຂດທີ່ພັກອາໄສ, ສຳນັກງານ, ສະຖານທີ່ສ້ອມແປງ, ສາງເກັບມ້ຽນທາດລະເບີດ ແລະ ທາດເຄມີຮັບໃຊ້ການຂຸດຄົ້ນ ແລະ ການຜະລິດ;

21. **ພື້ນທີ່ດິນເຂດເສດຖະກິດພິເສດ** ໝາຍເຖິງ ພື້ນທີ່ດິນທີ່ໄດ້ກຳນົດເປັນເຂດ ເພື່ອສ້າງເງື່ອນໄຂ ໃຫ້ແກ່ການດຶງດູດການລົງທຶນ ທີ່ນຳໃຊ້ເຕັກໂນໂລຊີສູງ, ນຳໃຊ້ນະວັດຕະກຳໃນການຜະລິດກະສິກຳ

ເປັນສິນຄ້າ, ການຜະລິດທີ່ສະອາດ, ປະຢັດຊັບພະຍາກອນທຳມະຊາດ ແລະ ພະລັງງານ ເພື່ອການພັດທະນາແບບຍືນຍົງ, ເປັນມິດກັບສິ່ງແວດລ້ອມ;

22. **ພື້ນທີ່ດິນເຂດອຸດສາຫະກຳ, ນິຄົມອຸດສາຫະກຳ** ໝາຍເຖິງ ພື້ນທີ່ດິນ ທີ່ໄດ້ກຳນົດໃຫ້ເປັນທີ່ຕັ້ງໂຮງຈັກ, ໂຮງງານ ລວມທັງສະຖານທີ່ພັກເຊົາຂອງກຳມະກອນ, ເຂດປຸງແຕ່ງ ເພື່ອສົ່ງອອກ, ສະຖາບັນ ຫຼື ສູນຄົ້ນຄວ້າທົດລອງດ້ານເຕັກນິກວິທະຍາສາດ, ສະຖານທີ່ບຳບັດນ້ຳເປື້ອນ, ບ່ອນບຳບັດສິ່ງເສດເຫຼືອອຸດສາຫະກຳ, ທໍ່ນ້ຳປະປາ, ທີ່ດິນອື່ນ ທີ່ໃຊ້ເຂົ້າໃນເປົ້າໝາຍອຸດສາຫະກຳ;

23. **ຜົນປະໂຫຍດສູງສຸດຂອງຊາດທີ່ພົວພັນກັບທີ່ດິນ** ໝາຍເຖິງ ການນຳໃຊ້ທີ່ດິນເຂົ້າໃນເປົ້າໝາຍໃດໜຶ່ງ ເພື່ອການພັດທະນາເສດຖະກິດ-ສັງຄົມ, ສ້າງລາຍຮັບເຂົ້າງົບປະມານແຫ່ງລັດ, ແກ້ໄຂຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໂດຍບໍ່ໃຫ້ທີ່ດິນຂອງລັດສູນເສຍ, ມີຜົນກະທົບທາງລົບໜ້ອຍທີ່ສຸດຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

24. **ເຂດໂລຊິດສະຕິກ** ໝາຍເຖິງ ພື້ນທີ່ຈັດສັນສິ່ງອຳນວຍຄວາມສະດວກໃຫ້ແກ່ໂລຊິດສະຕິກ ຊຶ່ງມີສະຖານີລົດຂົນສົ່ງສິນຄ້າ, ລານຕູ້ສິນຄ້າ, ສະຖານີຄ່ຽນຖ່າຍຕູ້ສິນຄ້າ ແລະ ສາງສິນຄ້າ;

25. **ຄ່າທຳນຽມການນຳໃຊ້ທີ່ດິນ** ໝາຍເຖິງ ພັນທະປະຈຳປີໃນການນຳໃຊ້ທີ່ດິນທີ່ຕ້ອງເສຍໃຫ້ລັດ ໂດຍເຈົ້າຂອງສິດນຳໃຊ້ທີ່ດິນ ແລະ ຜູ້ໄດ້ຮັບສິດນຳໃຊ້ທີ່ດິນຂອງລັດ ລວມທັງອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ຍົກເວັ້ນຜູ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດ, ຜູ້ຊື້ສິດ ນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ ແລະ ຜູ້ເຊົ່າທີ່ດິນຈາກພົນລະເມືອງລາວ;

26. **ຄ່າທຳນຽມກ່ຽວກັບທີ່ດິນ** ໝາຍເຖິງ ຄ່າສິດຄຸ້ມຄອງ, ບໍລິຫານຂອງລັດ ທີ່ເກັບຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວທາງດ້ານເສດຖະກິດ ແລະ ສັງຄົມ ໂດຍຜ່ານຂະແໜງການຂອງລັດ ດ້ວຍການອອກໃບອະນຸຍາດ ຫຼື ໃບຢັ້ງຢືນ;

27. **ຄ່າບໍລິການກ່ຽວກັບທີ່ດິນ** ໝາຍເຖິງ ຄ່າບໍລິການຮັບໃຊ້ທາງດ້ານບໍລິຫານວິຊາການທີ່ເກັບຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍຂະແໜງການທີ່ກ່ຽວຂ້ອງຂອງລັດ;

28. **ໜ່ວຍງານບໍລິການປະຕູດຽວ** ໝາຍເຖິງ ໜ່ວຍງານທີ່ເຮັດໜ້າທີ່ບໍລິການຂຶ້ນທະບຽນອອກໃບຕາດິນ, ຈົດທະບຽນການເຄື່ອນໄຫວ ແລະ ປ່ຽນແປງສິດນຳໃຊ້ທີ່ດິນ ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ;

29. **ຄອນໂດມິນຽມ** ໝາຍເຖິງ ອາຄານຫຼາຍຊັ້ນທີ່ມີຫຼາຍຫ້ອງ ຊຶ່ງໄດ້ຮັບອະນຸຍາດປຸກສ້າງຈາກລັດ ດ້ວຍຮູບການຂຶ້ນທະບຽນທີ່ດິນເປັນນິຕິບຸກຄົນ ເພື່ອປຸກສ້າງເປັນຄອນໂດມິນຽມ;

30. **ຫ້ອງຊຸດ** ໝາຍເຖິງ ບັນດາຫ້ອງຢູ່ໃນຄອນໂດມິນຽມ ຊຶ່ງສາມາດເປັນກຳມະສິດຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

31. **ຕົວເມືອງໃໝ່** ໝາຍເຖິງ ເຂດພັດທະນາໂຄງລ່າງພື້ນຖານທາງດ້ານ ການຄ້າ, ການບໍລິການ ແລະ ທີ່ຢູ່ອາໄສ ທີ່ທັນສະໄໝ ຊຶ່ງເຂດດັ່ງກ່າວບໍ່ແມ່ນຕົວເມືອງໃນລະບົບການປົກຄອງ;

32. **ສິດເໜືອທີ່ດິນ** ໝາຍເຖິງ ສິດຂອງບຸກຄົນໃດໜຶ່ງ ໃນການນຳໃຊ້ທີ່ດິນຂອງບຸກຄົນອື່ນຕາມຂອບເຂດສິດນຳໃຊ້ຂອງດິນຕອນນັ້ນ ເພື່ອສ້າງຜົນປະໂຫຍດໃຫ້ແກ່ຕົນເອງ ດ້ວຍການກໍ່ສ້າງສິ່ງໃດໜຶ່ງ, ປຸກຕົ້ນໄມ້ ແລະ ສິ່ງອື່ນ ໃສ່ທີ່ດິນຕອນດັ່ງກ່າວ ຕາມສັນຍາ ຫຼື ນິຕິກຳອື່ນ.

**ມາດຕາ 5 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານທີ່ດິນ**

ລັດ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນໃຫ້ມີປະສິດທິຜົນ ດ້ວຍ

ການວາງນະໂຍບາຍ, ວິທີການ ແລະ ມາດຕະການຕ່າງໆ ເຊັ່ນ ການສຶກສາອົບຮົມ, ການສົ່ງເສີມການລົງທຶນດ້ານແຮງງານ, ວັດຖຸ, ທຶນ, ເຕັກນິກ ເຕັກໂນໂລຊີ, ການກໍ່ສ້າງໂຄງລ່າງພື້ນຖານ ແລະ ການຄຸ້ມຄອງບໍລິຫານທີ່ດີ.

ລັດ ຫຼຸດຜ່ອນ ຫຼື ຍົກເວັ້ນຄ່າທຳນຽມ ແລະ ຄ່າບໍລິການສຳຫຼວດວັດແທກຂຶ້ນທະບຽນອອກໃບຕາດິນ ແລະ ການເສຍຄ່າທຳນຽມການນຳໃຊ້ທີ່ດິນນາໃຫ້ແກ່ຄອບຄົວທຸກຍາກ ແລະ ໃນເຂດບຸລິມະສິດກະສິກຳ ລວມທັງເຂດທີ່ໄດ້ປະກາດເປັນເຂດໄພພິບັດ.

ລັດ ຊຸກຍູ້, ສົ່ງເສີມ ໃຫ້ມີການພັດທະນາຊັບພະຍາກອນມະນຸດ, ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ພັດທະນາພູມປັນຍາຂອງຊາດ ແລະ ທ້ອງຖິ່ນ ເຂົ້າໃນການຄຸ້ມຄອງ, ບໍລິຫານ, ປົກປັກຮັກສາ, ນຳໃຊ້, ພັດທະນາທີ່ດິນ ແລະ ຟື້ນຟູດິນໃຫ້ມີຄຸນນະພາບດີຂຶ້ນ.

ລັດ ສົ່ງເສີມສິດເປັນເຈົ້າ ແລະ ບົດບາດຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ປະຊາຊົນ ເຂົ້າຮ່ວມໃນການຕິດຕາມກວດກາ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ພົວພັນກັບທີ່ດິນ.

**ມາດຕາ 6 (ໃໝ່) ຫຼັກການກ່ຽວກັບວຽກງານທີ່ດິນ**

ວຽກງານທີ່ດິນ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນ, ແຜນຍຸດທະສາດ ແລະ ແຜນນຳໃຊ້ທີ່ດິນ ລວມທັງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

2. ຄຸ້ມຄອງຢ່າງລວມສູນ, ເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ຮັບປະກັນບໍ່ໃຫ້ທີ່ດິນຂອງລັດສູນເສຍ;

3. ຮັບປະກັນການຮັກສາເນື້ອທີ່ດິນກະສິກຳ ຕາມແຜນແມ່ບົດຈັດສັນທີ່ດິນ ເພື່ອຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ, ເນື້ອທີ່ດິນທີ່ຈະນຳໃຊ້ ແລະ ພັດທະນາ ສາມສິບສ່ວນຮ້ອຍ ແລະ ເນື້ອທີ່ດິນປ່າໄມ້ປົກຫຸ້ມບໍ່ໃຫ້ຫຼຸດ ເຈັດສິບສ່ວນຮ້ອຍ ຂອງເນື້ອທີ່ດິນທົ່ວປະເທດ;

4. ຮັບປະກັນກົງຈັກການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານທີ່ດິນ ໃຫ້ສອດຄ່ອງກັບສະພາບຕົວຈິງໃນແຕ່ລະໄລຍະ, ມີການແບ່ງຂັ້ນຄຸ້ມຄອງລະຫວ່າງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນໃຫ້ຈະແຈ້ງ;

5. ຮັບປະກັນການປະສານສົມທົບກັນລະຫວ່າງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນໃນການຕິດຕາມກວດກາການປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນໃຫ້ມີປະສິດທິພາບ;

6. ຮັບປະກັນການມີສ່ວນຮ່ວມຂອງ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ປະຊາຊົນ ໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ທີ່ພົວພັນກັບທີ່ດິນ.

**ມາດຕາ 7 (ປັບປຸງ) ການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ**

ລັດ ປົກປ້ອງສິດ ແລະ ຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ ລວມທັງຊັບສິນທີ່ຕັ້ງຢູ່ເທິງໜ້າດິນ ຢ່າງມີປະສິດທິຜົນ, ມີຄວາມສະຫງົບ ເປັນປົກກະຕິ ແລະ ຍາວນານ.

**ມາດຕາ 8 (ປັບປຸງ) ການບໍ່ອະນຸຍາດໃຫ້ ຈັບຈອງ ແລະ ບຸກລຸກທີ່ດິນ**

ລັດ ບໍ່ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຈັບຈອງ ແລະ ບຸກລຸກທີ່ດິນ.

ການຈັບຈອງ ແລະ ບຸກລຸກທີ່ດິນຈະຖືກລົງໂທດຕາມກົດໝາຍ ແລະ ຈະຖືກຮິບຄືນ. ໃນກໍລະນີມີສິ່ງປຸກສ້າງ ຫຼື ດຳເນີນກິດຈະການໃດໜຶ່ງຢູ່ໃນທີ່ດິນດັ່ງກ່າວ ຕ້ອງຮື້ຖອນສິ່ງປຸກສ້າງ ແລະ ຢຸດເຊົາການດຳເນີນກິດຈະການ ໂດຍລັດຈະບໍ່ທົດແທນຄືນແຕ່ຢ່າງໃດ.

**ມາດຕາ 9 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວຢູ່ໃນດິນແດນ ສປປ ລາວ.

**ມາດຕາ 10 (ໃໝ່) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານທີ່ດິນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກນິກ ເຕັກໂນໂລຊີ, ການຝຶກອົບຮົມ ແລະ ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິຜົນ, ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ແຜນແມ່ບົດຈັດສັນ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ ທີ່ດິນ
### ໝວດທີ 1
### ແຜນແມ່ບົດຈັດສັນທີ່ດິນ

**ມາດຕາ 11 (ໃໝ່) ແຜນແມ່ບົດຈັດສັນທີ່ດິນ**

ແຜນແມ່ບົດຈັດສັນທີ່ດິນ ແມ່ນ ການກຳນົດເຂດ ແລະ ປະເພດທີ່ດິນຢ່າງເປັນລະບົບ ໂດຍສອດຄ່ອງກັບຈຸດພິເສດທ່າແຮງທາງດ້ານຊັບພະຍາກອນທຳມະຊາດ, ທີ່ຕັ້ງພູມສັນຖານຂອງປະເທດ ແລະ ຈຸດພິເສດແຕ່ລະທ້ອງຖິ່ນ ເພື່ອປົກປັກຮັກສາສິ່ງແວດລ້ອມ, ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການພັດທະນາປະເທດຊາດ ຕາມທິດຍືນຍົງ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ແຜນແມ່ບົດຈັດສັນທີ່ດິນ ປະກອບດ້ວຍ:

1. ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ;
2. ແຜນຈັດສັນທີ່ດິນທ້ອງຖິ່ນ.

**ມາດຕາ 12 (ໃໝ່) ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ**

ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແມ່ນ ການກຳນົດເຂດ, ປະເພດທີ່ດິນ ທີ່ມີລັກສະນະຍຸດທະສາດລະດັບຊາດ ເພື່ອພັດທະນາທີ່ດິນເຂດພື້ນທີ່ນຳໃຊ້ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ບ່ອນຢູ່ອາໄສ ແລະ ທຳການຜະລິດ ສາມສິບສ່ວນຮ້ອຍ ຂອງເນື້ອທີ່ທົ່ວປະເທດ ແລະ ເພື່ອຄຸ້ມຄອງ, ປົກປັກຮັກສາພື້ນທີ່ເຂດສະຫງວນ ແລະ ອະນຸລັກຊັບພະຍາກອນທຳມະຊາດ ໂດຍໃຫ້ມີປ່າໄມ້ປົກຫຸ້ມກວມເອົາ ເຈັດສິບສ່ວນຮ້ອຍ ຂອງເນື້ອທີ່ທົ່ວປະເທດ.